# ເຂົາເຈົ້າເຊື່ອຖືແບບໃດ?

**ພະຍານພະເຢໂຫວາ**ເຊື່ອວ່າພະເຢໂຫວາເປັນພະເຈົ້າທີ່ມີລິດທານຸພາບທຸກປະການ ເປັນຜູ້ສ້າງຟ້າສະຫວັນແລະແຜ່ນດິນໂລກ. ການດຳລົງຢູ່ຂອງສິ່ງທີ່ຖືກອອກແບບຢ່າງສະຫລັບຊັບຊ້ອນເຊິ່ງເປັນຕາງຶດງໍ້ໃນເອກະພົບອ້ອມຕົວເຮົາບົ່ງບອກຢ່າງມີເຫດຜົນວ່າ ພະຜູ້ສ້າງອົງມີປັນຍາທີ່ລ້ຳເລີດແລະເຕັມໄປດ້ວຍລິດເດດໄດ້ສ້າງສິ່ງເຫລົ່ານີ້ທັງຫມົດ. ຫາກຜົນງານຂອງມະນຸດຊາຍແລະຍິງສະທ້ອນເຖິງຄຸນທາດຂອງເຂົາເຈົ້າ ຜົນງານຂອງພະເຢໂຫວາພະເຈົ້າກໍຄືກັນ. ຄຳພີໄບເບິນບອກເຮົາວ່າ "ອາການຂອງພະເຈົ້າທີ່ຕາເຫັນບໍ່ໄດ້ນັ້ນກໍປາກົດໃຫ້ເຂົ້າໃຈໃນສັບພະທຸກສິ່ງທີ່ພະອົງໄດ້ສ້າງຕັ້ງແຕ່ແຮກສ້າງໂລກ." ນອກຈາກນັ້ນ ໂດຍບໍ່ຕ້ອງມີສຽງຫລືຄຳເວົ້າ "ຟ້າສະຫວັນທັງຫລາຍເລົ່າເລື່ອງລັດສະຫມີຂອງພະເຈົ້າ." —ໂລມ 1:20; ຄຳເພງ 19:1-4.

ຄົນເຮົາບໍ່ປັ້ນຫມໍ້ດິນຫລືສ້າງໂທລະພາບແລະຄອມພິວເຕີໂດຍບໍ່ມີຈຸດປະສົງ. ແຜ່ນດິນໂລກແລະສິ່ງທີ່ມີຊີວິດທັງຕົ້ນໄມ້ແລະສັດເປັນສິ່ງມະຫັດສະຈັນຫລາຍກວ່າສິ່ງເຫລົ່ານັ້ນອີກ. ໂຄງສ້າງຂອງຮ່າງກາຍມະນຸດປະກອບດ້ວຍຈຸລັງນັບເປັນລ້ານໆຈຸລັງເຊິ່ງຍາກທີ່ເຮົາຈະເຂົ້າໃຈໄດ້ ແມ່ນແຕ່ສະຫມອງທີ່ເຮົາໃຊ້ເພື່ອຄຶດຕຶກຕອງກໍຍັງອັດສະຈັນເກີນຄວາມເຂົ້າໃຈຂອງເຮົາ! ຫາກຄົນເຮົາມີຈຸດປະສົງໃນສິ່ງທີ່ເຂົາເຈົ້າປະດິດຄິດສ້າງຂຶ້ນເຊິ່ງເມື່ອເອົາມາທຽບກັນແລ້ວຍັງຈະມີຄວາມສຳຄັນຫນ້ອຍກວ່າ ພະເຢໂຫວາພະເຈົ້າກໍຍ່ອມຈະມີພະປະສົງໃນການສ້າງສິ່ງທີ່ເປັນຕາເກງຂາມເຫລົ່ານັ້ນ! ສຸພາສິດ 16:4 (*ທ.ປ.*) ກ່າວວ່າ "ທຸກສິ່ງທີ່ [ພະເຢໂຫວາ] ໄດ້ເຮັດ ກໍມີເປົ້າຫມາຍແນ່ນອນ."

ພະເຢໂຫວາສ້າງແຜ່ນດິນໂລກຢ່າງມີຈຸດມຸ່ງຫມາຍ ດັ່ງທີ່ພະອົງໄດ້ກ່າວກັບມະນຸດຄູ່ທຳອິດວ່າ "ຈົ່ງພາກັນອອກແມ່ແຜ່ລູກເກີດມາກທະວີຂຶ້ນໃຫ້ແຜ່ນດິນເຕັມ . . . ແລະຈົ່ງຄຸ້ມຄອງຝູງປາໃນນ້ຳທະເລກໍດີ ຝູງນົກໃນຟ້າອາກາດກໍດີ ແລະສັດທັງປວງອັນມີຊີວິດທີ່ຕີງໄປມາເທິງແຜ່ນດິນກໍດີ." (ຕົ້ນເດີມ 1:28) ເນື່ອງຈາກເຂົາເຈົ້າບໍ່ເຊື່ອຟັງ ເຂົາທັງສອງຈຶ່ງບໍ່ສາມາດເຮັດໃຫ້ແຜ່ນດິນໂລກເຕັມໄປດ້ວຍຄອບຄົວມະນຸດທີ່ຊອບທຳເຊິ່ງຈະເບິ່ງແຍງແຜ່ນດິນໂລກ ຕົ້ນໄມ້ແລະສັດດ້ວຍຄວາມຮັກ. ຄວາມຜິດພາດຂອງມະນຸດຄູ່ທຳອິດບໍ່ໄດ້ເຮັດໃຫ້ພະປະສົງຂອງພະເຢໂຫວາຕ້ອງຫລົ້ມແຫລວ. ຫລາຍພັນປີຕໍ່ມາມີຄຳຂຽນໄວ້ວ່າ "ພະເຈົ້າຜູ້ໄດ້ . . . ນິລະມິດສ້າງແຜ່ນດິນບໍ່ໃຊ່ໃຫ້ຢູ່ເປົ່າ." ພະອົງ "ໄດ້ສ້າງແຜ່ນດິນໃຫ້ມີຊາວຊົນ." ແຜ່ນດິນໂລກຈະບໍ່ຖືກທຳລາຍ ແຕ່ "ຍັງຢູ່ຕະຫລອດ." (ເອຊາອີ 45:18; ຜູ້ເທສະຫນາປ່າວປະກາດ 1:4) ພະປະສົງຂອງພະເຢໂຫວາສຳລັບແຜ່ນດິນໂລກຈະເປັນ



*ແຜ່ນດິນໂລກ . . . ພະເຢໂຫວາເປັນຜູ້ສ້າງ . . . ມະນຸດເປັນຜູ້ເບິ່ງແຍງ . . . ເປັນບ່ອນຢູ່ອາໄສຕະຫລອດໄປ*

Mountain High Maps®
Copyright ©1997 Digital Wisdom, Inc.

# ຄວາມເຊື່ອຂອງພະຍານພະເຢໂຫວາ

| ຄວາມເຊື່ອ | ເຫດຜົນຕາມຫລັກພະຄຳພີ |
|---|---|
| ຄຳພີໄບເບິນເປັນພະຄຳຂອງພະເຈົ້າ ແລະເປັນຄວາມຈິງ | **2 ຕີໂມ. 3:16, 17; 2 ເປ. 1:20, 21; ໂຢ. 17:17** |
| ຄຳພີໄບເບິນໄວ້ວາງໃຈໄດ້ຫລາຍກວ່າ ຄຳສອນທີ່ສືບທອດກັນມາ | **ມັດ. 15:3; ໂກໂລ. 2:8** |
| ຊື່ຂອງພະເຈົ້າແມ່ນເຢໂຫວາ | **ເພງ. 83:18; ເອຊາ. 26:4; 42:8, ອົບ. 6:3** |
| ພະຄລິດເປັນລູກຂອງພະເຈົ້າແລະ ມີຖານະຕ່ຳກວ່າພໍ່ | **ມັດ. 3:17; ໂຢ. 8:42; 14:28; 20:17; 1 ໂກ. 11:3; 15:28** |
| ພະຄລິດເປັນສິ່ງທຳອິດທີ່ພະເຈົ້າສ້າງ | **ໂກໂລ. 1:15; ຄຳປ. 3:14** |
| ພະຄລິດສິ້ນຊີວິດເທິງຫລັກ ບໍ່ແມ່ນເທິງໄມ້ກາງເຂນ | **ຄລາ. 3:13; ກິດ. 5:30** |
| ຊີວິດມະນຸດຂອງພະຄລິດໄດ້ໃຊ້ເປັນຄ່າໄຖ່ ໃຫ້ກັບມະນຸດທີ່ເຊື່ອຟັງ | **ມັດ. 20:28; 1 ຕີໂມ. 2:5, 6; 1 ເປ. 2:24** |
| ພະຄລິດຖວາຍເຄື່ອງບູຊາເທື່ອດຽວກໍພຽງພໍ | **ໂລມ 6:10; ເຫບ. 9:25-28** |
| ພະຄລິດໄດ້ຮັບການປຸກໃຫ້ຄືນມາຈາກຕາຍ ເປັນບຸກຄົນວິນຍານທີ່ອະມະຕະ | **1 ເປ. 3:18; ໂລມ 6:9; ຄຳປ. 1:17, 18** |
| ພະຄລິດປະທັບຢູ່ໃນສະພາບວິນຍານ | **ໂຢ. 14:19; ມັດ. 24:3; 2 ໂກ. 5:16; ເພງ. 110:1, 2** |
| ຕອນນີ້ເຮົາກຳລັງຢູ່ໃນຍຸກສຸດທ້າຍ | **ມັດ. 24:3-14; 2 ຕີໂມ. 3:1-5; ລືກາ 17:26-30** |
| ລາຊະອານາຈັກພາຍໃຕ້ພະຄລິດຈະປົກຄອງ ແຜ່ນດິນໂລກດ້ວຍຄວາມຊອບທຳ ແລະສະຫງົບສຸກ | **ເອຊາ. 9:6, 7; 11:1-5; ດາ. 7:13, 14; ມັດ. 6:10** |
| ລາຊະອານາຈັກຈະກໍ່ໃຫ້ມີຊີວິດ ແບບດີເລີດເທິງແຜ່ນດິນໂລກ | **ເພງ. 72:1-4; ຄຳປ. 7:9, 10, 13-17; 21:3, 4** |
| ແຜ່ນດິນໂລກຈະບໍ່ຖືກທຳລາຍ ຫລືຂາດຜູ້ຄົນອາໄສຢູ່ | **ຜູ້ປ. 1:4; ເອຊາ. 45:18; ເພງ. 78:69** |
| ພະເຈົ້າຈະກວາດລ້າງລະບົບປັດຈຸບັນ ໃນສົງຄາມອະລະມະເຄໂດນ | **ຄຳປ. 16:14, 16; ຊໂຟ. 3:8; ດາ. 2:44; ເອຊາ. 34:2; 55:10, 11** |
| ຄົນຊົ່ວຈະຖືກທຳລາຍຕະຫລອດໄປ | **ມັດ. 25:41-46; 2 ເທ. 1:6-9** |
| ຄົນທີ່ພະເຈົ້າພໍໃຈຈະໄດ້ຮັບ ຊີວິດຕະຫລອດໄປ | **ໂຢ. 3:16; 10:27, 28; 17:3; ມໂກ. 10:29, 30** |
| ທາງທີ່ຈະໄປສູ່ຊີວິດມີທາງດຽວເທົ່ານັ້ນ | **ມັດ. 7:13, 14; ເອເຟ. 4:4, 5** |
| ມະນຸດຊາດຕາຍຍ້ອນ ຄວາມຜິດບາບຂອງອາດາມ | **ໂລມ 5:12; 6:23** |
| ເມື່ອຄົນເຮົາຕາຍ ບໍ່ມີສິ່ງໃດດຳລົງຢູ່ຕໍ່ໄປ | **ເອເຊກ. 18:4; ຜູ້ປ. 9:10; ເພງ. 6:5; 146:4; ໂຢ. 11:11-14** |
| ນາລົກໃນຄຳພີໄບເບິນແມ່ນ ບ່ອນຝັງສົບທົ່ວໄປຂອງມະນຸດຊາດ | **ໂຢບ 14:13; ຄຳປ. 20:13, 14** |
| ຄວາມຫວັງຂອງຄົນທີ່ຕາຍແລ້ວ ແມ່ນການກັບຄືນມາຈາກຕາຍ | **1 ໂກ. 15:20-22; ໂຢ. 5:28, 29; 11:25, 26** |
| ຄວາມຕາຍທີ່ເກີດຈາກອາດາມຈະສິ້ນສຸດ | **1 ໂກ. 15:26, 54; ຄຳປ. 21:4; ເອຊາ. 25:8** |
| ມີພຽງແຕ່ແກະຝູງນ້ອຍຈຳນວນ 144.000 ຄົນ ໄປສະຫວັນແລະປົກຄອງຮ່ວມກັນ ກັບພະຄລິດ | **ລືກາ 12:32; ຄຳປ. 14:1, 3; 1 ໂກ. 15:40-53; ຄຳປ. 5:9, 10** |
| ຊົນ 144.000 ເກີດໃຫມ່ ເປັນລູກຝ່າຍວິນຍານຂອງພະເຈົ້າ | **1 ເປ. 1:23; ໂຢ. 3:3; ຄຳປ. 7:3, 4** |
| ຄຳສັນຍາໃຫມ່ເຮັດກັບ ອິດສະລາແອນຝ່າຍວິນຍານ | **ຢເຣ. 31:31; ເຫບ. 8:10-13** |
| ປະຊາຄົມຂອງພະຄລິດ ສ້າງຕັ້ງຂຶ້ນເທິງພະອົງເອງ | **ເອເຟ. 2:20; ເອຊາ. 28:16; ມັດ. 21:42** |
| ຄຳອະທິດຖານຄວນມຸ່ງກົງເຖິງພະເຢໂຫວາ ໂດຍຜ່ານທາງພະຄລິດເທົ່ານັ້ນ | **ໂຢ. 14:6, 13, 14; 1 ຕີໂມ. 2:5** |
| ບໍ່ຄວນໃຊ້ຮູບເຄົາລົບໃນການນະມັດສະການ | **ອົບ. 20:4, 5; ເລວີ. 26:1; 1 ໂກ. 10:14; ເພງ. 115:4-8** |
| ຕ້ອງຫລີກລ່ຽງລັດທິພູດຜີປີສາດ | **ບັນຍັດ. 18:10-12; ຄລາ. 5:19-21; ເລວີ. 19:31** |
| ຊາຕານເປັນຜູ້ປົກຄອງໂລກທີ່ບໍ່ປະຈັກແກ່ຕາ | **1 ໂຢ. 5:19; 2 ໂກ. 4:4; ໂຢ. 12:31** |
| ຄລິດສະຕຽນບໍ່ຄວນມີສ່ວນ ໃນຂະບວນການລວມຄວາມເຊື່ອ | **2 ໂກ. 6:14-17; 11:13-15; ຄລາ. 5:9; ບັນຍັດ. 7:1-5** |
| ຄລິດສະຕຽນຄວນຈະຢູ່ຕ່າງຫາກ ຈາກໂລກສະເຫມີ | **ຢໂກ. 4:4; 1 ໂຢ. 2:15; ໂຢ. 15:19; 17:16** |
| ປະຕິບັດຕາມກົດຫມາຍຂອງມະນຸດ ທີ່ບໍ່ຂັດກັບກົດຫມາຍຂອງພະເຈົ້າ | **ມັດ. 22:20, 21; 1 ເປ. 2:12; 4:15** |
| ການເອົາເລືອດເຂົ້າສູ່ຮ່າງກາຍ ບໍ່ວ່າທາງປາກຫລືທາງເສັ້ນເລືອດ ເປັນການລະເມີດກົດຫມາຍຂອງພະເຈົ້າ | **ຕົ້ນ. 9:3, 4; ເລວີ. 17:14; ກິດ. 15:28, 29** |
| ຕ້ອງເຊື່ອຟັງກົດຫມາຍຂອງຄຳພີໄບເບິນ ເລື່ອງສິນລະທຳ | **1 ໂກ. 6:9, 10; ເຫບ. 13:4; 1 ຕີໂມ. 3:2; ສຸພາ. 5:1-23** |
| ຊາດອິດສະລາແອນທໍ່ນັ້ນທີ່ຖືຮັກສາ ວັນຊະບາໂຕແລະໄດ້ຍຸດຕິ ພ້ອມກັບບັນຍັດຂອງໂມເຊ | **ບັນຍັດ. 5:15; ອົບ. 31:13; ໂລມ 10:4; ຄລາ. 4:9, 10; ໂກໂລ. 2:16, 17** |
| ບໍ່ເຫມາະສົມທີ່ມີຊົນຊັ້ນນັກເທດນັກບວດ ແລະມີຍົດສັກພິເສດ | **ມັດ. 23:8-12; 20:25-27; ໂຢບ 32:21, 22** |
| ມະນຸດບໍ່ໄດ້ເກີດມາຈາກວິວັດທະນາການ ແຕ່ວ່າເກີດຈາກການສ້າງ | **ເອຊາ. 45:12; ຕົ້ນ. 1:27; ມັດ. 19:4** |
| ພະຄລິດວາງແບບຢ່າງໃນການຮັບໃຊ້ພະເຈົ້າ ທີ່ເຮົາຕ້ອງເຮັດຕາມ | **1 ເປ. 2:21; ເຫບ. 10:7; ໂຢ. 4:34; 6:38** |
| ການບັບເຕມາໂດຍການຈຸ່ມຕົວຫລົບລົງໃນນ້ຳ ເປັນສັນຍະລັກສະແດງເຖິງການອຸທິດຕົວ | **ມໂກ. 1:9, 10; ໂຢ. 3:23; ກິດ. 19:4, 5** |
| ຄລິດສະຕຽນເຕັມໃຈໃຫ້ຄຳພະຍານ ຕໍ່ສາທາລະນະຊົນເຖິງຫລັກຄວາມຈິງ ໃນພະຄຳພີ | **ໂລມ 10:10; ເຫບ. 13:15; ເອຊາ. 43:10-12** |

ຈິງຍ້ອນພະອົງກ່າວວ່າ “ຄວາມຫມາຍໃຈຂອງເຮົາຈະສຳເລັດແລະເຮົາຈະກະທຳຕາມນ້ຳໃຈຂອງເຮົາຖ້ວນຖີ່.”—ເອຊາອີ 46:10.

ສະນັ້ນ ພະຍານພະເຢໂຫວາເຊື່ອວ່າແຜ່ນດິນໂລກຈະຢູ່ຕະຫລອດ ແລະທຸກໆຄົນທັງຄົນທີ່ມີຊີວິດຢູ່ແລະຄົນທີ່ຕາຍໄປແລ້ວເຊິ່ງດຳເນີນຊີວິດສອດຄ່ອງກັບພະປະສົງຂອງພະເຢໂຫວາຈະໄດ້ອາໄສຢູ່ເທິງແຜ່ນດິນໂລກທີ່ງົດງາມຕະຫລອດໄປ. ມະນຸດຊາດທັງຫມົດໄດ້ສືບທອດຄວາມບໍ່ສົມບູນແບບມາຈາກອາດາມແລະເອວາສະນັ້ນ ຈຶ່ງເປັນຄົນຜິດບາບ. (ໂລມ 5:12) ຄຳພີໄບເບິນບອກເຮົາວ່າ “ຄ່າຈ້າງຂອງຄວາມບາບເປັນຄວາມຕາຍ.” “ຄົນທັງຫລາຍທີ່ຍັງເປັນກໍຮູ້ຈັກວ່າເຂົາຈະຕາຍໄປ ແຕ່ວ່າພວກຄົນຕາຍແລ້ວບໍ່ຮູ້ຈັກສິ່ງໃດ.” “ຈິດໃຈທີ່ໄດ້ເຮັດການບາບ ຈິດໃຈນັ້ນຈະຕາຍໄປ.” (ໂລມ 6:23; ຜູ້ເທສະຫນາປ່າວປະກາດ 9:5; ເອເຊກຽນ 18:4, 20) ຍ້ອນແນວນັ້ນເຂົາເຈົ້າຈະມີຊີວິດອີກເພື່ອຈະຮັບຄວາມພອນທາງແຜ່ນດິນໂລກຮ່ວມກັນແນວໃດ? ໂດຍທາງເຄື່ອງບູຊາໄຖ່ຂອງພະເຍຊູເທົ່ານັ້ນ ເພາະວ່າພະອົງກ່າວວ່າ “ເຮົາເປັນການຄືນມາຈາກຕາຍແລະເປັນຊີວິດ. ຜູ້ທີ່ເຊື່ອໃນເຮົາແມ່ນວ່າເພິ່ນຕາຍແລ້ວກໍຈະມີຊີວິດຢູ່.” “ຄົນທັງປວງທີ່ຢູ່ໃນບ່ອນຝັງສົບກໍຈະຍິນສຽງປາກຂອງພະບຸດ ແລະເຂົາຈະອອກມາ”.—ໂຢຮັນ 5:28, 29; 11:25; ມັດທາຍ 20:28.





ເລື່ອງນີ້ຈະເກີດຂຶ້ນຢ່າງໃດ? ມີຄຳອະທິບາຍໃນ “ຂ່າວດີເລື່ອງລາຊະອານາຈັກ” ເຊິ່ງພະເຍຊູເລີ່ມຕົ້ນປະກາດເມື່ອຢູ່ເທິງແຜ່ນດິນໂລກ. (ມັດທາຍ 4:17-23, *ລ.ມ.*) ແຕ່ທຸກມື້ນີ້ພະຍານພະເຢໂຫວາກຳລັງປະກາດຂ່າວດີໃນວິທີພິເສດຫລາຍ.

